ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 43 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 24 ມີນາ 2018

ສຳນັກງານ ຄຄຊ
ເລກທີ 320
ວັນທີ 23 MAR 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 05-09/03/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,24% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກດຸນການຄ້າຂອງເດືອນ 01/2018 ຂາດດຸນເພີ່ມຂຶ້ນຈາກ 53,9 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ ມາເປັນ 56,6 ຕື້ໂດລາສະຫະລັດ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດເພີ່ມຂຶ້ນຈາກ 210.000 ຄົນ ໃນເດືອນຜ່ານມາ[1] ມາເປັນ 231.000 ຄົນ ຂອງອາທິດທີ 03/03/2018.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 26/02-02/03/2018 | ອາທິດນີ້ 05-09/03/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2277 | 1,2307 | -0,24% |
| ເຢນ/ໂດລາ | 105,75 | 106,75 | -0,94% |
| ບາດ/ໂດລາ | 31,45 | 31,36 | 0,29% |
| ເປໂຊ/ໂດລາ | 51,791 | 52,06 | -0,30% |
| ຣູເປັຍ/ໂດລາ | 13.755,00 | 13.777,00 | -0,16% |
| ໂດລາສິງກະໂປ/ໂດລາ | 1,3207 | 1,3184 | 0,17% |
| ຢວນ/ໂດລາ | 6,3454 | 6,3300 | 0,24% |

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 0,25% ຈາກ 59,38 ໂດລາ/ບາເຣວ ມາເປັນ 59,53 ໂດລາ/ບາເຣວ ເນື່ອງຈາກຖັງສຳຮອງນ້ຳມັນແອັດຊັງຂອງ ສ.ອາເມລິກາ ຫຼຸດລົງຈຳນວນ 0,79 ລ້ານບາເຣວ ຂອງອາທິດທີ 02/03/2018;
- ສຳລັບລາຄາຄຳເພີ່ມຂຶ້ນ 0,24% ຈາກ 1.316,21 ໂດລາ/ອອນ ມາເປັນ 1.319,36 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,02% ແຕ່ອ່ອນຄ່າລົງ 0,16% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,05% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,69% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 02/03/2018 | | | ອາທິດນີ້ 09/03/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.297,43 | 8.321,82 | 8.310,35 | 8.300,96 | 8.323,73 | 8.308,54 | -0,04% | -0,02% | 0,02% | 0,01% | 0,04% | 0,05% |
| ບາດ | 264,42 | 266,18 | 265,52 | 264,95 | 266,52 | 265,95 | -0,20% | -0,13% | -0,16% | -3,74% | -3,66% | -3,69% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ຫຼຸດລົງ 0,30% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 9,35%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,57% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 8,81%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (02-13/03/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 1,04 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 28,01 ລ້ານໂດລາ ແລະ ຂາຍໂດລາໄດ້ 26,97 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 252,16 ລ້ານບາດ (ໃນນີ້ຊື້ບາດໄດ້ 214,45 ລ້ານບາດ ແລະ ຂາຍບາດໄດ້ 466,61 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາຫຼຸດລົງ 7,50% ແລະ ເງິນບາດຫຼຸດລົງ 22,55%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 8,85 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 12 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,60 ລ້ານໂດລາ ແລະ ເງິນບາດ ຈຳນວນ 95,24 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າ: ບໍ່ມີການຊື້-ຂາຍເງິນໂລດາ ແລະ ເງິນບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

| | ອາທິດທີ່ຜ່ານມາ 23/02/2018-01/03/2018 | | ອາທິດນີ້ 02-13/03/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **31,04** | **239,92** | **28,01** | **214,45** | **-9,76%** | **-10,62%** |
| - ທ/ຄທຸລະກິດລັດ | 16,21 | 91,42 | 12,08 | 79,10 | -25,48% | -13,48% |
| - ທ/ຄທຸລະກິດອື່ນໆ | 14,83 | 148,50 | 15,93 | 135,35 | 7,42% | -8,86% |
| 2. ການຂາຍເງິນຕາຕ່າງປະເທດ | **28,40** | **639,39** | **26,97** | **466,61** | **-5,04%** | **-27,02%** |
| - ທ/ຄທຸລະກິດລັດ | 14,08 | 233,56 | 8,18 | 90,65 | -41,90% | -61,19% |
| - ທ/ຄທຸລະກິດອື່ນໆ | 14,32 | 405,83 | 18,79 | 375,96 | 31,22% | -7,36% |
| ຊື້-ຂາຍສຸດທິທທກ | **2,64** | **-399,47** | **1,04** | **-252,16** | **-60,61%** | **-36,88%** |
| - ຜົດດ່ຽງຊື້-ຂາຍ | 8,51% | -166,50% | 3,71% | -117,58% | -56,40% | -29,38% |
| - ມູນຄ່າການຊື້-ຂາຍ | **59,44** | **879,31** | **54,98** | **681,06** | **-7,50%** | **-22,55%** |
| 3.ການຊື້-ຂາຍລະຫວ່າງທທລກັບ ທທກ | **-5,40** | **-20,00** | **-8,85** | **-12,00** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 5,40 | 20,00 | 8,89 | 12,00 | | |
| 4.ຊື້-ຂາຍລະຫວ່າງທທກດ້ວຍກັນ | **9,37** | **128,88** | **3,60** | **95,24** | | |
| 5.ທຫລກັບ ພາກສ່ວນອື່ນໆ | **0,00** | **600,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 600,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2018 ຄາດວ່າຈະຢູ່ໃນລະດັບ 1,28% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ເພີ່ມຂຶ້ນ 381,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 71,03 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 54% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 28,48 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 722 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 98 ສະບັບ ເທົ່າກັບ 11,95% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 396,72 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 18,78 ຕື້ກີບ ເທົ່າກັບ 4,51% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-08/03/2018) ມີທັງໝົດ 3.175 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.097 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 318,12 ຕື້ກີບ ຈາກ 1.269 ຕື້ກີບ ມາເປັນ 1.587,12 ຕື້ກີບ ເທົ່າກັບ 25,06%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 78 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ ຈຳນວນ 197 ຕື້ກີບ ຈາກ 196,54 ຕື້ກີບ ມາເປັນ 393,54 ຕື້ກີບ ເທົ່າກັບ 100,23%.

**4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 912,78 ຈຸດ ຫຼຸດລົງ ຈາກ 950,11 ຈຸດ ຫຼື ເທົ່າກັບ 3,93% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 1,42 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ

5,71 ຕື້ກີບ ເພີ່ມຂຶ້ນ 46,04% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 3,36% ຂອງມູນຄ່າການຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| BCEL | 579.000 | 3.325.955.000 | 5.900 | **26.800** | **152.840.000** | **5.700** | -95,37 | -95,40 | -200 | -3,39 |
| EDL-GEN | 128.300 | 571.585.000 | 4.550 | **71.400** | **315.075.000** | **4.400** | -44,35 | -44,88 | -150 | -3,30 |
| LWPC | 1.500 | 9.370.000 | 5.300 | **1.301.200** | **5.205.210.000** | **4.000** | 86.646,67 | 55.451,87 | -1.300 | -24,53 |
| PTL | 400 | 775.000 | 1.900 | **1.200** | **1.920.000** | **1.600** | 200,00 | 147,74 | -300 | -15,79 |
| SVN | 100 | 295.000 | 2.950 | **300** | **870.000** | **2.900** | 200,00 | 194,92 | -50 | -1,69 |
| PCD | 5.900 | 8.200.000 | 1.400 | **100** | **140.000** | **1.400** | -98,31 | -98,29 | - | - |
| ທັງໝົດ | - | - | - | **17.100** | **43.015.000** | **2.500** | | | 2.500 | |
| | 715.200 | 3.916.180.000 | | **1.418.100** | **5.719.070.000** | | 98,28 | 46,04 | | |

**3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>**

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ກຸມພາ 2018 ທີ່ (ທຫລ), ❷ ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳ ຂອງ ທ່ານເລຂາທິການ 56 ໃຫຍ່, ປະທານປະເທດແຫ່ງ ສປປ ລາວ ຕໍ່ກອງປະຊຸມກະສິກຳ ແລະ ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2017 ແລະ ທິດທາງແຜນການປີ 2018 ທີ່ (ຫ້ອງປະຊຸມແຫ່ງຊາດ), ❸ ກອງປະຊຸມສະຫຼຸບວຽກງານສະຖາບັນການເງິນຈຸລະພາກ ປະຈຳປີ 2017 ທີ່ (ຫ້ອງປະຊຸມ ICTC), ❹ ກອງປະຊຸມປຶກສາຫາລືຜ່ານຮ່າງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ຮ່ວມກັບຂະແໜງການຂັ້ນສູນກາງ ທີ່ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງເວດລ້ອມ), ❺ ກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮທີ່ຖືກຈັດຊັ້ນຂອງ ທທກ ສະບັບປັບປຸງ ທີ່ (ທຫລ), ❻ ກອງປະຊຸມສຳມະນາວຽກງານ SMEs ຄົມມະນາຄົມ ແລະ ການອອກແບບຈັດຊັ້ນການພັດທະນາ ທີ່ (ປະເທດຈີນ) ແລະ ❼ ກອງປະຊຸມສຳມະນາ ໃນຫົວຂໍ້: ໜຶ່ງແລວໜຶ່ງເສັ້ນທາງ ແລະ ການຮ່ວມມືລະຫວ່າງລາວ-ຈີນ ທີ່ (ປະເທດຈີນ);
- ສຳເລັດການຄົ້ນຄວ້າຮ່າງແຜນຈັດຕັ້ງປະຕິບັດການເຂົ້າເຖິງການບໍລິການທາງດ້ານການເງິນສຳລັບ ສປປ ລາວ 2018-2025 ແລະ ວິໄສທັດຮອດປີ 2030 ສະບັບທຳອິດ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະໄໝສາມັນຄັ້ງທີ I ປະຈຳປີ 2018 ທີ່ (ທຫລ), ❷ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ 04 ຂອງໜ່ວຍພັກກົມຈັດຕັ້ງ ແລະ

ພະນັກງານ ທີ່ (ທຫລ), ❸ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເນື້ອໃນສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❹ ກອງປະຊຸມນຳສະເໜີຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບປັບປຸງ ທີ່ (ທຫລ), ❺ ກອງປະຊຸມປຶກສາຫາລືໃນການກະກຽມບັນດາເນື້ອໃນ ແລະ ຫົວຂໍ້ທີ່ລັດຖະບານຈະລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ທີ່ (ຫສນຍ), ❻ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດທີ່ຕິດພັນກັບຂະແໜງການທະນາຄານ ທີ່ (ທຫລ), ❼ ກອງປະຊຸມຄະນະເກັບກຳຂໍ້ມູນ ແລະ ຄົ້ນຄວ້າກ່ຽວກັບການສະເໜີໂອນສັນຍາເງິນກູ້ບ້ວງເກັບຊື້ໄມ້ ຂອງບໍລິສັດ ພົງຊັບທະວີ ກໍ່ສ້າງຂົວ-ທາງ ໄປໃຫ້ສະມາຄົມເຟີນິເຈີລາວ ທີ່ (ທຫລ), ❽ ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ), ❾ ກອງປະຊຸມໂຄງການພັດທະນາຕະຫຼາດທຶນອາຊຽນ (ACMF) ຄັ້ງທີ 28 ແລະ ກອງປະຊຸມພັນທະບັດສີຂຽວ ທີ່ (ສສ.ຫວຽດນາມ) ແລະ ❿ ພິທີຈັດຕັ້ງປະຖະກະຖາ ເນື່ອງໃນໂອກາດວັນແມ່ຍິງສາກົນປະຈຳປີ 2018 ທີ່ (ທຫລ);

- ກະກຽມການຕ້ອນຮັບການເຂົ້າຢ້ຽມຂໍ່ານັບ: ❶ ທ່ານ ຫວັງ ສີ ນວນ ປະທານສະພາກວດກາ ທະນາຄານແຫ່ງຊາດຈີນ ສຳນັກງານໃຫຍ່ ແລະ ❷ ທ່ານ ກອບສັກ ພູຕະກຸນ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ຈາກລາດຊະອານາຈັກໄທ ທີ່ (ທຫລ).

ຫົວໜ້າຫ້ອງການ

ພຸມມະລີ ສິຣິພົນເດດ